ບໍລິສັດ ຊິມັ່ງລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022

ບໍລິສັດ ຊິມັ້ງລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະບໍລິຫານ	4
ບົດລາຍງານການທົບທວນເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ	5 - 6
ໃບລາຍງານຖານະການເງິນສຳລັບຫົກເດືອນຕົ້ນປີ	7 - 8
ໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບໄລຍະຫົກເດືອນຕົ້ນປີ	10
ໃບລາຍງານກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີ	11
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ	12 - 29

ບໍລິສັດ ຊິມັ່ງລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຊິມັ່ງລາວ ມະຫາຊົນ ("ບໍລິສັດ"), ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັ່ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງ ບໍລິສັດທີ່ເຊັ່ນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດຜັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI) ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC) ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ທີ່ອອກໂດຍກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງ ບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງ ເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມີນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ກິດຈະກຳຫຼັກຕາມໃບທະບຽນວິສາຫະກິດກິດຂອງບໍລິສັດທີ່ດຳເນີນໂດຍບໍລິສັດແມ່ນມີດັ່ງນີ້:

- ຜະລິດຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງສຳລັບການບໍລິໂພກພາຍໃນ ແລະ ສົ່ງອອກ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນທີ່ຕັ້ງຂອງບໍລິສັດທີ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງ ມີໂຮງງານຊິມັ່ງວັ້ງວຽງ ຫຼັງ 2 ເຊິ່ງຕັ້ງຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ຂໍ້ມູນທົ່ວໄປ (ຕໍ່)

ສະພາອຳນວຍການ

ສະມາຊິກສະພາອຳນວຍການພາຍໃນໄລຍະ ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*
ທ່ານ ຢາງ ຊຸນຢິນ	ປະທານ
ທ່ານ ວັນທອງ ສິດທິກຸນ	ຮອງປະທານ
ທ່ານ ຈ່າງ ລີ້	ສະມາຊິກ
ທ່ານ ອຸ ຢາງ ຈີ ຢິງ	ສະມາຊິກ
ທ່ານ ເຈຍ ເຢົາຊີ	ສະມາຊິກ
ທ່ານ ຄຳບົນ ໄຊເລົ່າວົງ	ສະມາຊິກ
ທ່ານ ວິຈິດ ສຸວັນນະລາດ	ສະມາຊິກ
ທ່ານ ສ່ຽວ ເຈຍ	ສະມາຊິກອິດສະຫຼະ
ທ່ານ ຫຼີ ຊຸນ ໂປ	ສະມາຊິກອິດສະຫຼະ
ທ່ານ ວົງວິຈິດ ແກ້ວວົງກົດ	ສະມາຊິກອິດສະຫຼະ

ຄະນະບໍລິຫານຂອງບໍລິສັດ

ສະມາຊິກຄະນະບໍລິຫານຂອງບໍລິສັດພາຍໃນໄລຍະ ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*
ທ່ານ ຈ່າງ ລີ້	ຜູ້ອຳນວຍການໃຫຍ່
ທ່ານ ວິຈິດ ສຸວັນນະລາດ	ຮອງຜູ້ອຳນວຍການໃຫຍ່
ທ່ານ ເຈຍ ເຢົາຊີ	ຜູ້ອຳນວຍການ
ທ່ານ ຄຳບົນ ໄຊເລົ່າວົງ	ຜູ້ອຳນວຍການ
ທ່ານ ສ່ຽວ ເຈຍ	ຜູ້ອຳນວຍການ
ທ່ານ ຫຼີ ຊຸນ ໂປ	ຜູ້ອຳນວຍການ
ທ່ານ ວົງວິຈິດ ແກ້ວວົງກົດ	ຜູ້ອຳນວຍການ

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດພາຍໃນໄລຍະ ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*
ທ່ານ ສ່ຽວ ເຈຍ	ປະທານ
ທ່ານ ຫຼີ ຊຸນ ໂປ	ສະມາຊິກ
ທ່ານ ວິງວິຈິດ ແກ້ວວິງກິດ	ສະມາຊິກ

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດພາຍໃນໄລຍະ ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ແມ່ນ ທ່ານ ຈ່າງ ລີ, ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນແອນຢັ້ງ ລາວ ຈຳກັດ.

ບໍລິສັດ ຊີມັງລາວ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານບໍລິສັດ ຊີມັງລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານການເງິນຂອງບໍລິສັດ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ, ຄະນະບໍລິຫານຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ທີ່ຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ:
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານວ່າ ບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນໄດ້ຮັບການເປີດເຜີຍຕາມຄວາມຖືກຕ້ອງເໝາະສົມຢູ່ຕະຫຼອດເວລາ, ກ່ຽວກັບຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ແລະ ຮັບປະກັນວ່າ ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ໄດ້ສອດຄ່ອງກັບຫຼັກການທາງດ້ານບັນຊີທີ່ເໝາະສົມ. ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີສະ ບັບນີ້.

ຖະແຫຼງການຂອງຄະນະບໍລິຫານ

ພວກຂ້າພະເຈົ້າ ຂໍຖະແຫຼງວ່າ, ຕາມຄຳເຫັນຂອງຄະນະບໍລິຫານ, ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ແມ່ນຖືກກະກຽມຢ່າງຖືກຕ້ອງຕາມຄວາມເປັນຈິງ, ໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ.

ໃນນາມຄະນະບໍລິຫານ:

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທອງ ສີ

ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2022

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 61228095/E-66860352

ບົດລາຍງານການທົບທວນເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ

ຮຽນ: ຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື

ຄຳນຳ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີຂອງ ບໍລິສັດ ຊີມັງລາວ ມະຫາ ຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນສຳລັບຫົກເດືອນຕົ້ນປີ ນະວັນທີ 30 ມິຖຸນາ 2022, ແລະ ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ, ລວມທັງບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ຄະນະບໍລິຫານຮັບຜິດຊອບສຳລັບການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີເຫຼົ່ານີ້ ໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີເຫຼົ່ານີ້ຕາມການທົບທວນຄືນຂອງພວກຂ້າພະເຈົ້າ.

ຂອບເຂດການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍອີງຕາມມາດຕະຖານສາກົນການທົບທວນຄືນເລກທີ 2410, "*ການປະຕິບັດການທົບທວນຄືນຂັ້ນຫຼັກການເງິນສຳລັບຫົກເດືອນຕົ້ນປີທີ່ດຳເນີນໂດຍນັກກວດສອບອິດສະຫຼະຂອງນິຕິບຸກຄົນ*". ການທົບທວນຄືນຂັ້ນຫຼັກການເງິນ ປະກອບດ້ວຍການສອບຖາມ, ສ່ວນໃຫຍ່ແມ່ນບຸກຄົນທີ່ຮັບຜິດຊອບວຽກງານການເງິນ ແລະ ການບັນຊີ, ແລະ ນຳໃຊ້ຂັ້ນຕອນການວິເຄາະ ແລະ ຂັ້ນຕອນການທົບທວນຄືນອື່ນໆ. ການທົບທວນຄືນນີ້ ມີຂອບເຂດໜ້ອຍກວ່າການດຳເນີນການກວດສອບທີ່ອີງຕາມມາດຕະຖານສາກົນດ້ານການກວດສອບ, ດ້ວຍເຫດນັ້ນ, ພວກຂ້າພະເຈົ້າບໍ່ສາມາດໄດ້ຮັບການຮັບປະກັນທີ່ເຮັດໃຫ້ໝັ້ນໃຈໄດ້ວ່າຈະພົບເຫັນໄດ້ເຖິງບັນຫາທີ່ສຳຄັນທັງໝົດທີ່ອາດສາມາດກຳນົດໄດ້ໃນການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ໄດ້ອອກຄຳເຫັນໃນການກວດສອບ.

ການສະຫຼຸບ

ອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ມີສິ່ງໃດທີ່ເປັນສາເຫດໃຫ້ພວກຂ້າພະເຈົ້າເຊື່ອວ່າ ເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີສະບັບນີ້ ບໍ່ໄດ້ຖືກກະກຽມຢ່າງຖືກຕ້ອງໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່:

- ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ, ເຊິ່ງຊີ້ໃຫ້ເຫັນວ່າບໍລິສັດມີຜົນຂາດທຶນສຸດທິ 10.2 ຕື້ກີບ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022. ນະວັນທີລາຍງານ, ບໍລິສັດມີການຂາດທຶນສະສົມຈຳນວນ 63 ຕື້ກີບ. ໃນວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກແຈ້ງການເລກທີ 202/ບຊລ ກ່ຽວກັບການຢຸດຜະລິດຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດຂໍ້ສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

A member firm of Ernst & Young Global Limited

Building a better working world

- ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ, ເຊິ່ງໄດ້ອະທິບາຍນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍບໍລິສັດ. ບັນດານະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີເປົ້າໝາຍໃນການນຳສະເໜີໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານກະແສເງິນສົດສຳລັບຫົກເດືອນຕົ້ນປີ ທີ່ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ການສະຫຼຸບຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

ໃນນາມ ແລະ ຕາງໜ້າຂອງບໍລິສັດ ເອີນແອນຢັ ລາວ ຈຳກັດ

ບໍລິສັດ ເອີນ ແອນ ຢັ ລາວ ຈຳກັດ
ERNST & YOUNG LAO CO.,LTD

ແອ່ງ ຫວ ຈິກ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2022

A member firm of Ernst & Young Global Limited

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຖານະການເງິນສຳລັບຫົກເດືອນຕົ້ນປີ
ນະວັນທີ 30 ມິຖຸນາ 2022

	ບົດອະທິບາຍ ເລກທີ	*30 ມິຖຸນາ 2022 ກີບ*	*31 ທັນວາ 2021 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິມບັດ, ອາຄານ ແລະ ອຸປະກອນ	4	5,961,949,148	9,534,834,962
ຊັບສິນພວມກໍ່ສ້າງ	5	6,822,689,571	6,822,689,571
ຊັບສິມບັດຄົງທີ່ບໍ່ມີຕົວຕົນ		328,548,475	328,548,475
ຊັບສິນບໍ່ໝຸນວຽນອື່ນໆ	6	178,839,998	210,400,000
ລວມຊັບສິນບໍ່ໝຸນວຽນ		**13,292,027,192**	**16,896,473,008**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	166,500,000	18,000,000
ເຄື່ອງໃນສາງ	8	17,217,343,574	20,801,679,743
ໜີ້ຕ້ອງຮັບອື່ນໆ	9	4,571,849	38,921,847
ໜີ້ຕ້ອງຮັບການຄ້າ	10	6,104,487,910	12,239,495,443
ເງິນສົດ	11	144,055,696	351,792,791
ລວມຊັບສິນໝຸນວຽນ		**23,636,959,029**	**33,449,889,824**
ລວມຊັບສິນທັ້ງໝົດ		**36,928,986,221**	**50,346,362,832**

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຖານະການເງິນສຳລັບຫົກເດືອນຕົ້ນປີ (ຕໍ່)
ນະວັນທີ 30 ມິຖຸນາ 2022

	ບົດອະທິບາຍ ເລກທີ	*30 ມິຖຸນາ 2022 ກີບ*	*31 ທັນວາ 2021 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ເງິນກູ້ຢືມ		-	2,000,000,000
ໜີ້ຕ້ອງສົ່ງການຄ້າ		1,344,939,513	2,211,807,006
ເງິນລ່ວງໜ້າຈາກລູກຄ້າ		152,773,000	152,773,000
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	21	5,728,574,137	5,728,574,137
ພັນທະທາງອາກອນ	12	5,319,201,280	5,210,837,226
ໜີ້ຕ້ອງສົ່ງໃຫ້ພະນັກງານ		8,444,966,800	9,494,267,488
ໜີ້ຕ້ອງສົ່ງອື່ນໆ	13	14,325,836,188	14,320,721,709
ລວມໜີ້ສິນໝຸນວຽນ		**35,316,290,918**	**39,118,980,566**
ລວມໜີ້ສິນທັງໝົດ		**35,316,290,918**	**39,118,980,566**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	14.1	20,002,000,000	20,002,000,000
ສ່ວນເກີນມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍກິດຈະການ		18,549,465,596	18,549,465,596
ຂາດທຶນສະສົມ		(63,028,798,350)	(53,414,111,387)
ລວມທຶນ		**1,612,695,303**	**11,227,382,266**
ລວມໜີ້ສິນ ແລະ ທຶນທັງໝົດ		**36,928,986,221**	**50,346,362,832**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ*	*ສຳລັບໄລຍະຫົກເດືອນຕົ້ນປີ ທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ຂາດທຶນຂັ້ນຕົ້ນ		-	-
ລາຍຮັບຈາກການດຳເນີນງານອື່ນໆ	15	1,249,767,380	123,307,115
ລາຍຈ່າຍຈາກການດຳເນີນງານອື່ນໆ	16	(7,535,295,991)	(7,597,474,949)
ເງິນແຮສຳລັບບັນຊີໜີ້ທວງຍາກ		(1,009,841,548)	(2,739,683,271)
ລາຍຈ່າຍບໍລິຫານ	17	(2,211,633,020)	(2,665,533,408)
ຂາດທຶນຈາກການດຳເນີນງານ		**(9,507,003,179)**	**(12,879,384,513)**
ລາຍຮັບທາງການເງິນ	18	52,058	10,169 ,446
ລາຍຈ່າຍທາງການເງິນ	19	(107,735,842)	(221,666,665)
ຂາດທຶນກ່ອນອາກອນ		**(9,614,686,963)**	**(13,090,881,712)**
ລາຍຈ່າຍອາກອນກຳໄລ	20	-	-
ຂາດທຶນສຸດທິຫຼັງອາກອນພາຍໃນໄລຍະ		**(9,614,686,963)**	**(13,090,881,712)**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022

	ທຶນຈົດທະບຽນທີ່ຖອກແລ້ວ ກີບ	*ສ່ວນເກີນມູນຄ່າຮຸ້ນ ກີບ*	*ຄັງສຳຮອງຕາມລະບຽບການ ກີບ*	*ຄັງສຳຮອງເພື່ອຂະຫຍາຍກິດຈະການ ກີບ*	*ຂາດທຶນສະສົມ ກີບ*	*ລວມ ກີບ*
ນະວັນທີ 1 ມັງກອນ 2021	20,002,000,000	18,385,975,511	7,704,052,546	18,549,465,596	(31,821,405,723)	32,820,087,930
ຂາດທຶນສຸດທິພາຍໃນໄລຍະ	-	-	-	-	(13,090,881,712)	(13,090,881,712)
ນະວັນທີ 30 ມິຖຸນາ 2021	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(44,912,287,435)**	**19,729,206,218**
ນະວັນທີ 1 ມັງກອນ 2022	20,002,000,000	18,385,975,511	7,704,052,546	18,549,465,596	(53,414,111,387)	11,227,382,266
ຂາດທຶນສຸດທິພາຍໃນໄລຍະ	-	-	-	-	(9,614,686,963)	(9,614,686,963)
ນະວັນທີ 30 ມິຖຸນາ 2022	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(63,028,798,350)**	**1,612,695,303**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022* *ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021* *ກີບ*
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(9,614,686,963)**	**(13,090,881,712)**
ດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນຂອງຊັບສິນບັດ, ອາຄານ ແລະ ອຸປະກອນ	4	3,572,885,814	3,484,008,199
ເງິນແຮສຳລັບເຄື່ອງໃນສາງ		484,775,013	3,370,861,497
ເງິນແຮສຳລັບໜີ້ທວງຍາກ		1,009,841,548	2,739,683,270
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(85,513,620)	(9,280,049)
ກຳໄລຈາກກິດຈະກຳການລົງທຶນ		(52,058)	(889,417)
ລາຍຈ່າຍດອກເບ້ຍ	19	22,222,222	221,666,665
ດັດແກ້ທຶນໝຸນວຽນ:			
ຫຼຸດລົງ ຂອງໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ລວມທັງໜີ້ ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ		5,042,575,986	9,994,895,299
ຫຼຸດລົງຂອງເຄື່ອງໃນສາງ		3,099,561,156	67,649,782
ຫຼຸດລົງຂອງໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ລວມທັງໜີ້ຕ້ອງ ຮັບຈາກພາກສ່ວນທີ່ກ່ຽວຂ້ອງ		(1,802,689,650)	(3,785,977,607)
ລາຍຈ່າຍດອກເບ້ຍເງິນກູ້		(22,222,222)	(216,666,665)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**1,706,697,226**	**2,775,069,262**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ			(2,050,000)
ລາຍຮັບຈາກດອກເບ້ຍ		52,058	889,417
ກະແສເງິນສົດສຸດທິນຳຈາກ/(ນຳໃຊ້ໃນ)ກິດຈະກຳການລົງທຶນ		**52,058**	**(1,160,583)**
ກິດຈະກຳທາງການເງິນ			
ຊຳລະເງິນກູ້ທະນາຄານ		(2,000,000,000)	(6,000,000,000)
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການເງິນ		**(2,000,000,000)**	**(6,000,000,000)**
ຫຼຸດລົງສຸດທິຂອງເງິນສົດ		(293,250,715)	(3,226,091,321)
ເງິນສົດຕົ້ນໄລຍະ		351,792,791	3,416,095,713
ຜົນກະທົບຈາກການປ່ຽນແປງຂອງອັດຕາແລກປ່ຽນ		85,513,620	9,280,049
ເງິນສົດທ້າຍໄລຍະ	11	**144,055,696**	**199,284,441**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2022

1. ຂໍ້ມູນບໍລິສັດ

ບໍລິສັດ ຊິມັ່ງລາວ ມະຫາຊົນ ("ບໍລິສັດ"), ກ່ອນໜ້ານີ້ແມ່ນ ບໍລິສັດ ຊິມັ່ງລາວ ຈຳກັດ, ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI) ("ຝ່າຍ ກ") ກັບບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC) ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊິມັ່ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊິມັ່ງ ເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ມີການປັບປຸງໃບທະບຽນວິສາຫະກິດດັ່ງລຸ່ມນີ້:

ໃບທະບຽນວິສາຫະກິດ	*ວັນທີ*
0078/ຈທກ	5 ເມສາ 2006
1719/ຈທກ	26 ກຸມພາ 2009
0244/ຈທກ	20 ກຸມພາ 2012
1436/ຈທກ	15 ພະຈິກ 2012
791/ຈທກ	13 ພະຈິກ 2015
1016/ຈທກ	5 ທັນວາ 2016
0247/ຈທກ	24 ມີນາ 2017
0688/ຈທກ	2 ສິງຫາ 2017
0160/ຈທກ	20 ກຸມພາ 2018

ກິດຈະກຳຫຼັກຕາມໃບທະບຽນວິສາຫະກິດຂອງບໍລິສັດແມ່ນມີດັ່ງນີ້:

- ຜະລິດຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງ;
- ຂາຍສົ່ງ ແລະ ຂາຍຍ່ອຍຊິມັ່ງ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບຊິມັ່ງສຳລັບການບໍລິໂພກພາຍໃນ ແລະ ສົ່ງອອກ.

ບໍລິສັດໄດ້ຢຸດກິດຈະກຳການຜະລິດທັງໝົດຊົ່ວຄາວຕັ້ງແຕ່ເດືອນ ເມສາ 2020 ຈົນເຖິງວັນທີຂອງບົດລາຍງານນີ້ສະບັບນີ້.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານ ໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊິມັ່ງວັງວຽງ ຫຼັງ 2 ເຊິ່ງຕັ້ງຢູ່ເມືອງວັງວຽງ, ແຂວງວຽງຈັນ, ສປປ ລາວ.

ນະວັນທີ 30 ມິຖຸນາ 2022, ບໍລິສັດມີພະນັກງານ 12 ຄົນ (31 ທັນວາ 2021: 25 ຄົນ).

2. ພື້ນຖານການກະກຽມ

ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີສະບັບນີ້ແມ່ນໄດ້ຖືກລາຍງານເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການດຳເນີນທຸລະກິດຂອງບໍລິສັດ.

ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3. ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖາ ນະການເງິນສຳລັບໄລຍະຫົກເດືອນຕົ້ນປີ, ຜົນຂອງການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ ແລະ ກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ຂໍ້ສົມມຸດຖານກ່ຽວກັບຄວາມສືບເນື່ອງຂອງການດຳເນີນທຸລະກິດ

ບໍລິສັດໄດ້ຂາດທຶນສຸດທິມູນຄ່າ 9.6 ຕື້ກີບ ສຳລັບໄລຍະທີ່ສິ້ນສຸດ ວັນທີ 31 ທັນວາ 2022. ນະວັນທີດັ່ງກ່າວ, ບໍລິສັດມີຂາດທຶນສະສົມມູນຄ່າ 63 ຕື້ກີບ.ໃນວັນທີ 25 ສິງຫາ 2020 ບໍລິສັດໄດ້ອອກແຈ້ງການເລກທີ *202/ບຊລ* ກ່ຽວກັບການຢຸດຜະລິດຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດຂໍ້ສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

ບໍລິສັດໄດ້ລະບຸນັກລົງທຶນລາຍໃໝ່ ແລະ ໄດ້ພັດທະນາແຜນລະອຽດຂອງການປັບປຸງໂຄງສ້າງ ເພື່ອໃຫ້ບໍລິສັດສາມາດກັບມາດຳເນີນທຸລະກິດຕາມປົກກະຕິ. ນອກຈາກນັ້ນ, ຜູ້ບໍລິຫານຂອງບໍລິສັດຍັງໄດ້ມີແຜນທາງການເງິນ ໃນການຊຳລະໜີ້ສິນໄລຍະສັ້ນເພື່ອສືບຕໍ່ການດຳເນີນງານໃນປີຕໍ່ໄປ. ບົນພື້ນຖານດັ່ງກ່າວ, ຜູ້ບໍລິຫານຂອງບໍລິສັດໄດ້ພິຈາລະນາຄວາມເໝາະສົມໃນການກະກຽມເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີຕາມຫຼັກການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ແມ່ນບໍ່ໄດ້ລວມລາຍການດັດແກ້ຂອງ ຊັບສິນ ແລະ ໜີ້ສິນ ຈຳເປັນ ຖ້າຫາກ ບໍລິສັດບໍ່ມີຄວາມສາມາດສືບຕໍ່ໃນການດຳເນີນທຸລະກິດ.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ຊັບສິນບັດ,ອາຄານ ແລະ ອຸປະກອນ

ຊັບສິນບັດ,ອາຄານ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນບັດຄົງທີ່ມີຕົວຕົນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ.

ເມື່ອຊັບສິນບັດ, ອາຄານ ແລະ ອຸປະກອນ ໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມ ແມ່ນຈະຖືກຕັດອອກຈາກໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.

ຊັບສິນທີ່ຖືກຫັກຄ່າຫຼຸ້ຍຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າເພີ່ມເຕີມໃດໆ ທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີອີກ.

ຄ່າຫຼຸ້ຍຫ້ຽນ

ການຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ມີຕົວຕົນ ແມ່ນນຳໃຊ້ວິທີຄິດໄລ່ແບບສະໝ່ຳສະເໝີຕົວຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ຊັບສິນອື່ນໆ	10 ປີ

ອາຍຸການນຳໃຊ້ຂອງການປັບປຸງສິດທິໃນການເຊົ່າ ແມ່ນຖືກກຳນົດຕາມການນຳໃຊ້ທີ່ຄາດຄະເນຂອງຄະນະບໍລິຫານ ແລະ ອາດຈະຕ່າງຈາກໄລຍະການເຊົ່າ.

ການຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນບັດ, ອາຄານ ແລະ ອຸປະກອນ ຊຶ່ເພີ່ມ ແລະ ສະສາງອອກພາຍໃນໄລຍະ ແມ່ນຄິດໄລ່ອີງຕາມສັດສ່ວນຊຶ່ງອ້າງອີງເຖິງເດືອນທີ່ຊື້ເຂົ້າ ແລະ ສະສາງອອກຕົວຈິງ. ສຳລັບຊັບສິນພວມກໍ່ສ້າງແມ່ນ ບໍ່ມີການຫັກຄ່າຫຼຸ້ຍຫ້ຽນຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນ ໝາຍເຖິງສິດໃນການນຳໃຊ້ທີ່ດິນທີ່ບໍ່ກຳນົດໄລຍະເວລາການນຳໃຊ້ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນທີ່ຖືກຈັດຊື້, ຄຸ້ມຄອງ ແລະ ນຳໃຊ້ໂດຍບໍລິສັດ ເຊິ່ງອອກຊື່ພາຍໃຕ້ຊື່ຂອງພາກສ່ວນກ່ຽວຂ້ອງອື່ນ ແມ່ນຈະລາຍງານເປັນຊັບສິນບໍ່ໝຸນວຽນອື່ນໆຂອງບໍລິສັດ. ຄ່າຫຼ້ຍຫຼັ່ຽນແມ່ນຖືກຄິດໄລ່ແບບສະໝ່ຳສະເໝີຕົວຕາມອາຍຸການນຳໃຊ້ຕະຫຼອດໄລຍະ 20 ປີ.

ສັນຍາເຊົ່າ

ໃນການກຳນົດຕົກລົງເປັນສັນຍາເຊົ່າ, ຫຼື ປະກອບດ້ວຍສັນຍາເຊົ່ານັ້ນ, ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງ ແລະ ຮຽກຮ້ອງໃຫ້ມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນສະເພາະ ແລະ ການຕົກລົງທີ່ບົ່ງບອກເຖິງສິດໃນການໃຊ້ຊັບສິນ.

ບໍລິສັດໃນຖານະຜູ້ເຊົ່າ

ສັນຍາເຊົ່າ, ເຊິ່ງຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງຄວາມເປັນເຈົ້າຂອງລາຍການທີ່ເຊົ່າ ບໍ່ໄດ້ໂອນໄປຫາບໍລິສັດເປັນສາລະສຳຄັນຄືສັນຍາການເຊົ່າດຳເນີນງານ. ເງິນທີ່ຈ່າຍຕາມສັນຍາເຊົ່າດຳເນີນງານຖືກຮັບຮູ້ເປັນລາຍຈ່າຍຢູ່ໃນໃບລາຍງານຜົນການດຳເນີນງານໂດຍວິທີເສັ້ນຊື່ຕະຫຼອດອາຍຸການສັນຍາເຊົ່າ. ໜີ້ຕ້ອງສິ່ງຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຈ່າຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປັດຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າທີ່ແທ້ຈິງສຸດທິ.

ມູນຄ່າທີ່ແທ້ຈິງສຸດທິ ສະແດງເຖິງລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າໃຊ້ຈ່າຍຄາດຄະເນ ທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ລະບົບການຕິດຕາມສາງເປັນໄລຍະ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ, ວັດຖຸສິ້ນເປືອງ, ເຄື່ອງມື ແລະ ອຸປະກອນ	- ຕົ້ນທຶນຈັດຊື້ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ.
ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	- ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າໃຊ້ຈ່າຍໃນການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ເກີດຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫຼັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃນລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເຫຼືອເງິນແຮແມ່ນບັນທຶກເຂົ້າລາຍຈ່າຍຈາກການດຳເນີນງານອື່ນໆ ໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ.

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮສຳລັບບັນຊີໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າລວມສຸດທິຂອງ ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ.

ເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ແມ່ນອີງຕາມຈຳນວນມື້ກາຍກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະກາຍກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ເຊິ່ງກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນໄລຍະທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງທາງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອະນາຄົດສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະນີທີ່ຖອກທຶນຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ທຶນຈົດທະບຽນບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ສ່ວນເກີນມູນຄ່າຮຸ້ນ

ສ່ວນເກີນມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ,ນະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລາຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

ຄັງສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັງແຮຕາມລະບຽບການ.

ຄັງແຮຕາມລະບຽບການເປັນຄັງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງ ສິບເປີເຊັນ (10%) ຂອງກຳໄລສຸດທິຈະຖືກຫັກເຂົ້າໃນຄັງສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງແຮດັ່ງກ່າວຫາກມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດ ອາດຈະໂຈະການຫັກກຳໄລເຂົ້າຄັງແຮດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກເຈົ້າຂອງບໍລິສັດ.

ຄັງແຮອື່ນໆປະກອບມີ ຄັງສຳຮອງສະຫວັດດີການ ແລະ ຄັງສຳຮອງເພື່ອຂະຫຍາຍກິດຈະການເຊິ່ງຫັກຈາກກຳໄລສະສົມຕາມຄວາມເໝາະສົມອີງຕາມກົດລະບຽບພາຍໃນຂອງບໍລິສັດ ລົງວັນທີ 15 ທັນວາ ປີ 1998. ອັດຕາເງິນແຮທີ່ເໝາະສົມຈະຖືກພິຈາລະນາໂດຍສະພາອຳນວຍການຂອງບໍລິສັດໃນແຕ່ລະປີ.

ຄັງແຮແມ່ນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

ເງິນຕາຕ່າງປະເທດ

ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ຖືກລາຍງານເປັນສະກຸນເງິນກີບລາວ ເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນສະເລ່ຍໃນມື້ຂອງໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ. ກຳໄລ ແລະ ຂາດທຶນທັງໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ.

ການຮັບຮູ້ລາຍຮັບ

ລາຍຮັບຈະຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸດຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບຮູ້ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ການຮັບຮູ້ລາຍຮັບ (ຕໍ່)

ການຂາຍສິນຄ້າ

ລາຍຮັບຈະຖືກຮັບຮູ້ເມື່ອຄວາມສ່ຽງອັນໃຫຍ່ຫຼວງ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງປະສິດທິພາບຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

ອາກອນ

ອາກອນກຳໄລ ແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນໄລຍະ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ຕ້ອງສົ່ງອາກອນອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ຂອງພະນັກງານ.

ອາກອນມູນຄ່າເພີ່ມ ແມ່ນອາກອນທີ່ຕ້ອງຈ່າຍໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມໃນແຕ່ລະໄລຍະ.

ອາກອນລາຍໄດ້ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມໃນແຕ່ລະໄລຍະ.

ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນຕ່າງໆຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ອີງຕາມການເຫັນດີ ແລະ ຕົກລົງກັນຕາມສັນຍາໃນກໍລະນີທີ່ບໍ່ມີລາຄາຕະຫຼາດ.

ລາຍຈ່າຍຈາກການດຳເນີນງານອື່ນໆ

ລາຍຈ່າຍທີ່ຕິດພັນກັບການຢຸດຜະລິດຂອງໂຮງງານແມ່ນຖືກຮັບຮູ້ໃນລາຍຈ່າຍຈາກການດຳເນີນງານອື່ນໆ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຂໍ້ມູນຂອງຫົວໜ່ວຍການດຳເນີນງານ

ຫົວໜ່ວຍການດຳເນີນງານເປັນອົງປະກອບທີ່ກຳນົດແຍກອອກຕ່າງຫາກໂດຍບໍລິສັດເຊິ່ງປະກອບທຸລະກິດການສະໜອງ ສິນຄ້າ ຫຼື ການບໍລິການທີ່ກ່ຽວຂ້ອງ (ສ່ວນທຸລະກິດ) ຫຼື ການສະໜອງສິນຄ້າ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດສະເພາະ (ສ່ວນງານທາງພູມສາດ), ທີ່ມີຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງໄປຈາກນັ້ນຂອງສ່ວນອື່ນໆ.

ກິດຈະກຳຫຼັກຂອງບໍລິສັດຕາມໃບອະນຸຍາດດຳເນີນທຸລະກິດ ແມ່ນການຜະລິດ ແລະ ຈຳໜ່າຍປຸ໋ນ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບປຸ໋ນ. ນັ້ນຈາກນີ້, ກິດຈະກຳເຫຼົ່ານີ້ແມ່ນດຳເນີນຢູ່ໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງບໍລິສັດຈຶ່ງບໍ່ໄດ້ຮັບຜົນກະທົບຈາກການບໍລິການຂອງບໍລິສັດທີ່ບໍລິສັດສະໜອງ ຫຼື ສະຖານທີ່ທີ່ບໍລິສັດດຳເນີນທຸລະກິດ. ດັ່ງນັ້ນ, ການຄຸ້ມຄອງຂອງບໍລິສັດແມ່ນຖືວ່າມີພຽງແຕ່ສ່ວນດຽວສຳລັບສ່ວນທຸລະກິດ ແລະ ສ່ວນພູມສາດ ແລະ ດັ່ງນັ້ນຈຶ່ງບໍ່ຈຳເປັນຕ້ອງນຳສະເໜີຂໍ້ມູນຕາມສ່ວນງານ.

4. ຊັບສິນບັດ, ອາຄານ ແລະອຸປະກອນ

	ອາຄານ ແລະ ສິ່ງປຸກສ້າງ ກີບ	*ເຄື່ອງຈັກ ແລະ ອຸປະກອນ ກີບ*	*ພາຫະນະຂົນສົ່ງ ກີບ*	*ການປັບປຸງສິດໃນ ການເຊົ່າ ກີບ*	*ເຄື່ອງໃຊ້ຫ້ອງການ ກີບ*	*ຊັບສິນອື່ນໆ ກີບ*	*ລວມ ກີບ*
ຕົ້ນທຶນ							
ນະວັນທີ 1 ມັງກອນ 2022	134,382,315,687	213,077,367,762	21,688,472,198	1,855,693,263	2,088,589,576	436,983,816	373,529,422,302
ນະວັນທີ 30 ມິຖຸນາ 2022	134,382,315,687	213,077,367,762	21,688,472,198	1,855,693,263	2,088,589,576	436,983,816	373,529,422,302
ຄ່າຫຼຸ້ຍຫ້ຽນສະສົມ							
ນະວັນທີ 1 ມັງກອນ 2022	127,927,344,842	211,476,367,895	20,304,006,315	1,761,294,896	2,088,589,576	436,983,816	363,994,587,340
ຫັກຄ່າຫຼຸ້ຍຫ້ຽນໃນໄລຍະ	3,089,367,456	245,881,194	209,205,303	28,431,861	-	-	3,572,885,814
ນະວັນທີ 30 ມິຖຸນາ 2022	131,016,712,298	211,722,249,089	20,513,211,618	1,789,726,757	2,088,589,576	436,983,816	367,567,473,154
ມູນຄ່າຕາມບັນຊີສຸດທິ							
ວັນທີ 1 ມັງກອນ 2022	6,454,970,845	1,600,999,867	1,384,465,883	94,398,367	-	-	9,534,834,962
ວັນທີ 30 ມິຖຸນາ 2022	3,365,603,389	1,355,118,673	1,175,260,580	65,966,506	-	-	5,961,949,148

5. ຊັບສິນພວມກໍ່ສ້າງ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	5,112,200,406	5,110,150,406
ໂຄງການກໍ່ສ້າງໂຮງງານໄລຍະສອງ	1,710,489,165	1,710,489,165
	6,822,689,571	**6,820,639,571**

6. ຊັບສິນບໍ່ໝຸນວຽນອື່ນໆ

ຊັບສິນບໍ່ໝຸນວຽນອື່ນໆ ແມ່ນສະແດງເປັນມູນຄ່າສຸດທິຂອງທີ່ດິນ ແລະ ເຮືອນ ເຊິ່ງຊື້ໂດຍບໍລິສັດ ແຕ່ຈົດທະບຽນພາຍໃຕ້ຊື່ ທ່ານ ວັນທອງ ສິດທິກຸນ - ອະດີດຜູ້ອຳນວຍການໃຫຍ່ຂອງບໍລິສັດ.

7. ຊັບສິນໝຸນວຽນອື່ນໆ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ພະນັກງານ	166,500,000	18,000,000
	166,500,000	**18,000,000**

8. ເຄື່ອງໃນສາງ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງຕ່າງໆ	1,603,082,962	4,660,106,097
ອຸປະກອນ ແລະ ວັດສະດຸ	10,511,745,187	10,554,283,208
ສິນຄ້າພວມຜະລິດ	10,117,771,841	10,117,771,841
ຜະລິດຕະພັນສຳເລັດຮູບ	773,052,368	773,052,368
ເງິນແຮສຳລັບເຄື່ອງໃນສາງ	(5,788,308,784)	(5,303,533,771)
	17,217,343,574	**20,801,679,743**

9. ໜີ້ຕ້ອງຮັບອື່ນໆ

	30 ມິຖຸນາ 2022 *ກີບ*	*31 ທັນວາ 2021* *ກີບ*
ເງິນມັດຈຳໃຫ້ລູກຄ້າ	-	-
ອື່ນໆ	4,571,849	38,921,847
	4,571,849	**38,921,847**

10. ໜີ້ຕ້ອງຮັບການຄ້າ

	30 ມິຖຸນາ 2022 *ກີບ*	*31 ທັນວາ 2021* *ກີບ*
ໜີ້ຕ້ອງຮັບການຄ້າ	12,431,527,767	17,557,693,752
ເງິນແຮສຳລັບບັນຊີໜີ້ທວງຍາກ	(6,328,039,857)	(5,318,198,309)
	6,104,487,910	**12,239,495,443**

ລາຍລະອຽດຂອງເງິນແຮສຳລັບບັນຊີໜີ້ທວງຍາກນະວັນທີ 30 ມິຖຸນາ 2022 ມີດັ່ງນີ້:

ໄລຍະການກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ການກຳນົດ 6 ເດືອນ ຫາ 1 ປີ	-	-
ການກຳນົດ 1 ປີ ຫາ 2 ປີ	14,800,000	7,400,000
ຫຼາຍກວ່າ 2 ປີ	6,320,639,857	6,320,639,857
ລວມ	**6,335,439,857**	**6,328,039,857**

ລາຍລະອຽດຂອງເງິນແຮສຳລັບບັນຊີໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2021 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
6 ເດືອນ ຫາ 1 ປີ	-	-
1 ປີ ຫາ 2 ປີ	4,313,187,783	2,156,593,892
ຫຼາຍກວ່າ 2 ປີ	3,161,604,417	3,161,604,417
ລວມ	**7,474,792,200**	**5,318,198,309**

11. ເງິນສົດ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ເງິນສົດໃນຄັງ	25,869,283	13,891,418
ເງິນຝາກທະນາຄານ	118,186,413	337,901,373
	144,055,696	**351,792,791**

12. ພັນທະທາງອາກອນ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ໜີ້ຕ້ອງສົ່ງອາກອນຜູ້ສະໜອງຕ່າງປະເທດ	3,028,945,773	2,999,996,916
ອາກອນມູນຄ່າເພີ່ມສິ້ນອອກ	311,367,276	233,628,774
ໜີ້ຕ້ອງສົ່ງອາກອນກຳໄລ (ບົດອະທິບາຍເລກທີ 20)	479,656,526	479,656,526
ອາກອນອື່ນໆ	1,499,231,705	1,497,555,010
	5,319,201,280	**5,210,837,226**

13. ໜີ້ຕ້ອງສົ່ງອື່ນໆ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ໜີ້ຕ້ອງສົ່ງເງິນປັນຜົນ *(ບົດອະທິບາຍເລກທີ 21)* (*)	13,581,363,960	13,581,363,960
ອື່ນໆ	744,472,228	739,357,749
	14,325,836,188	**14,320,721,709**

(*) ລາຍລະອຽດຂອງໜີ້ຕ້ອງຈ່າຍເງິນປັນຜົນໃຫ້ກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ໜີ້ຕ້ອງຈ່າຍເງິນປັນຜົນ ປະຈຳປີ 2016	3,395,146,565	3,395,146,565
ໜີ້ຕ້ອງຈ່າຍເງິນປັນຜົນ ປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງຈ່າຍເງິນປັນຜົນ ປະຈຳປີ 2014	4,413,161,190	4,413,161,190
	13,581,363,960	**13,581,363,960**

14. ທຶນຈົດທະບຽນທີ່ຖອກແລ້ວ

14.1 ຮຸ້ນ

	30 ມິຖຸນາ 2022		*31 ທັນວາ 2021*	
	ຈຳນວນ (ຮຸ້ນ)	*ມູນຄ່າ (ກີບ)*	*ຈຳນວນ (ຮຸ້ນ)*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ອອກ ແລະ ຈ່າຍ				
ຮຸ້ນສາມັນ	40,004,000	20,002,000,000	40,004,000	20,002,000,000

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ສຄຄຊ ອອກໃຫ້ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ເນື່ອງຈາກວ່າບໍລິສັດໄດ້ສຳເລັດຂັ້ນຕອນ IPO ໂດຍການອອກຮຸ້ນຈຳນວນ 12,001,200 ຮຸ້ນ ທີ່ມີລາຄາໜ້າບັດ 500 ກີບ/ຮຸ້ນ ແລະ ລາຄາຂາຍແມ່ນ 2,400 ກີບ/ຮຸ້ນ.

ມູນຄ່າຂອງຮຸ້ນທັງໝົດ 40,004,000 ຮຸ້ນຂອງບໍລິສັດ (ພາຍໃຕ້ສັນຍາລັກ "ບຊລ") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ ຕັ້ງແຕ່ວັນທີ 2 ມີນາ 2018. ມູນຄ່າໜ້າບັດຂອງແຕ່ລະຮຸ້ນແມ່ນ 500 ກີບ.

ໂຄງຮ່າງຜູ້ຖືຮຸ້ນຂອງບໍລິສັດ ນະວັນທີ 30 ມິຖຸນາ 2022 ມີດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ສ່ວນຮ້ອຍ*
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC)	14,277,428	35.69%
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການ ຂາອອກ-ຂາເຂົ້າ (DAI)	13,717,372	34.29%
ບໍລິສັດຫຼັກຊັບລາວ - ຈີນ (LCS)	7,544,754	18.86%
ບໍລິສັດເອກະຊົນ ແລະ ນັກລົງທຶນລາຍບຸກຄົນອື່ນໆ	4,464,446	11.16%
	40,004,000	

15. ລາຍຮັບຈາກການດຳເນີນງານອື່ນໆ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຮັບຈາກການຂາຍວັດຖຸດິບ ແລະ ເສດເຫຼັກ	1,182,848,380	123,307,115
ລາຍຮັບອື່ນໆ	66,919,000	-
	1,249,767,382	**123,307,115**

16. ລາຍຈ່າຍຈາກການດຳເນີນງານອື່ນໆ

ລາຍຈ່າຍສ່ວນໃຫຍ່ແມ່ນຕິດພັນກັບການຢຸດຜະລິດຂອງໂຮງງານມີລາຍລະອຽດດັ່ງລຸ່ມນີ້:

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ຄ່າຫຼຸ້ຍຫ້ຽນຂອງໂຮງງານທີ່ຢຸດຊົ່ວຄາວ	3,502,177,402	3,401,061,086
ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ	484,775,013	3,370,861,497
ລາຍຈ່າຍໃຫ້ພະນັກງານ	224,000,315	439,456,977
ສາທາລະນຸປະໂພກ ແລະ ນ້ຳມັນ	46,249,750	-
ຕົ້ນທຶນການຂາຍວັດຖຸດິບ	3,099,561,156	-
ອື່ນໆ	178,532,355	386,095,389
	7,535,295,991	**7,597,474,949**

17. ລາຍຈ່າຍບໍລິຫານ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຈ່າຍໃຫ້ພະນັກງານ	1,387,336,902	1,441,079,613
ລາຍຈ່າຍທາງວິຊາການ	259,991,666	353,724,537
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	70,708,412	82,947,113
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	50,525,640	55,038,273
ລາຍຈ່າຍຄ່າເຊົ່າ	6,508,410	15,156,438
ລາຍຈ່າຍຄ່າບຳລຸງຮັກສາ	25,494,000	28,680,000
ລາຍຈ່າຍຄ່າການພິມ ແລະ ເຜີຍແຜ່	6,363,500	5,894,944
ລາຍຈ່າຍຄ່າເດີນທາງ	106,980,400	17,285,000
ລາຍຈ່າຍໃນການບໍລິຫານອື່ນໆ	297,724,090	665,727,490
	2,211,633,020	**2,665,533,408**

18. ລາຍຮັບທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021*
	ກີບ	*ກີບ*
ລາຍຮັບຈາກດອກເບ້ຍ	52,058	889,417
ກຳໄລສຸດທິຈາກອັດຕາແລກປ່ຽນ	-	9,280 ,049
	52,058	**10,169,466**

19. ລາຍຈ່າຍທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021*
	ກີບ	*ກີບ*
ລາຍຈ່າຍດອກເບ້ຍ	22,222,222	221,666,665
ຂາດທຶນສຸດທິຈາກອັດຕາແລກປ່ຽນ	85,513,620	-
	107,735,842	**221,666,665**

20. ອາກອນກຳໄລ

ອີງຕາມໃບອະນຸຍາດລົງທຶນ ສະບັບປັບປຸງ ວັນທີ 17 ພະຈິກ 1998, ບໍລິສັດແມ່ນຈະຖືກຍົກເວັ້ນອາກອນກຳໄລສຳລັບ ສີ່ປີທຳອິດ ໂດຍເລີ່ມຈາກປີທຳອິດທີ່ໄດ້ມີກຳໄລ ແລະ ອັດຕາອາກອນກຳໄລຈະຫຼຸດລົງ 50% ຂອງອັດຕາອາກອນກຳໄລ ທີ່ປະກາດໃຊ້ສຳລັບສອງປີຖັດໄປ. ບໍລິສັດມີພັນທະໃນການຈ່າຍອາກອນກຳໄລ("ອກລ") ໃນອັດຕາ 20% ຫຼັງຈາກ ໄລຍະເວລາຫຼຸດຜ່ອນອາກອນ. ປີທຳອິດທີ່ມີກຳໄລ ແມ່ນປີການບັນຊີ ວັນທີ 31 ທັນວາ 2005.

ບໍລິສັດໄດ້ຈົດທະບຽນກັບຕະຫຼາດຫຼັກຊັບລາວນັບແຕ່ 2 ມີນາ 2018. ອີງຕາມໜັງສືແຈ້ງການເລກທີ 2618/ກສອ ລົງວັນທີ 4 ມິຖຸນາ 2018 ຈາກກະຊວງ ການເງິນ, ບໍລິສັດ ໄດ້ຮັບອະນຸຍາດໃຫ້ຫຼຸດອາກອນກຳໄລ 5% ຈາກອັດຕາອາກອນປົກກະຕິ ສຳລັບ ສີ່ ປີທຳອິດ ຈາກປີ 2018 ຫາ 2021. ຫຼັງຈາກນັ້ນ, ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາປົກກະຕິ ທີ່ນຳໃຊ້. ອີງຕາມກົດໝາຍວ່າດ້ວຍອາກອນກຳໄລ ເລກທີ 67/ສພຊ ນະວັນທີ 18 ມິຖຸນາ 2019 (ໃຊ້ແທນກົດໝາຍວ່າ ດ້ວຍອາກອນກຳໄລ ສະບັບເລກທີ 70/ສພຊ) ເຊິ່ງມີຜົນບັງຄັບໃຊ້ສຳລັບໄລຍະຈາກວັນທີ 1 ມັງກອນ 2020, ອາກອນກຳ ໄລໃນອັດຕາ 13% ແມ່ນຖືກນຳໃຊ້ກັບບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ສຳລັບໄລຍະສີ່ປີນັບແຕ່ວັນທີ່ຈົດທະບຽນ ແລະ ອັດຕາ 20% ສຳລັບປີຕໍ່ໄປ. ດັ່ງນັ້ນ, ລາຍໄດ້ທີ່ຕ້ອງມອບອາກອນຂອງບໍລິສັດ ສຳລັບໄລຍະ ແມ່ນຈະຖືກນຳໃຊ້ໃນ ອັດຕາ 20%.

ການແຈ້ງອາກອນຂອງບໍລິສັດ ແມ່ນຈະຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍ ສາອາກອນ ແລະ ກົດລະບຽບຕ່າງໆມີການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນ

ສຳລັບໄລຍະຫົກເດືອນຕົ້ນປີອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

20. ອາກອນກຳໄລ (ຕໍ່)

ໜີ້ຕ້ອງສົ່ງອາກອນພາຍໃນໄລຍະແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນປີ. ໜີ້ສິນອາກອນພາຍໃນປີຂອງບໍລິສັດຖືກຄິດໄລ່ໂດຍການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ.

ການຄາດຄະເນອາກອນກຳໄລຖືກສະແດງດັ່ງລຸ່ມນີ້:

	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ຂາດທຶນກ່ອນອາກອນ	**(9,614,686,963)**	**(13,090,881,712)**
ດັດແກ້ເພື່ອ ຫຼຸດຂາດທຶນກ່ອນຫັກອາກອນ:		
ເງິນແຮສຳລັບເຄື່ອງໃນສາງ	484,775,013	3,370,861,497
ເງິນແຮສຳລັບໜີ້ທວງຍາກ	1,009,841,548	2,739,683,270
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	747,143,691	704,577,422
ຄາດຄະເນຂາດທຶນອາກອນໃນໄລຍະ	**(7,372,926,711)**	**(6,275,759,523)**
ຄາດຄະເນລາຍຈ່າຍອາກອນກຳໄລພາຍໃນໄລຍະໃນອັດຕາ 20 % (2020:13%)	-	-
ອາກອນກຳໄລຕ້ອງຈ່າຍຕົ້ນໄລຍະ	479,656,526	479,656,526
ອາກອນກຳໄລທີ່ໄດ້ຈ່າຍໃນໄລຍະ	-	-
ໜີ້ຕ້ອງສົ່ງອາກອນກຳໄລທ້າຍໄລຍະ *(ບົດອະທິບາຍເລກທີ 12)*	**479,656,526**	**479,656,526**

ການຍົກຍອດຂາດທຶນທາງອາກອນ

ບໍລິສັດມີສິດທີ່ຈະຍົກຍອດຂາດທຶນທາງອາກອນໄປຫັກລົບກັບລາຍໄດ້ທາງອາກອນພາຍໃນຫ້າປີຫຼັງຈາກປີທີ່ຂາດທຶນ. ນະວັນທີໃບລາຍງານຖານະການເງິນຫົກເດືອນຕົ້ນປີ, ບໍລິສັດ ມີຂາດທຶນທາງອາກອນສະສົມທີ່ສາມາດຫັກຕໍ່ກັບລາຍໄດ້ທາງອາກອນໃນອະນາຄົດ. ລາຍລະອຽດດັ່ງລຸ່ມນີ້:

ປີທີ່ເລີ່ມຕົ້ນ	*ສາມາດນຳໃຊ້ ຮອດປີ*	*ມູນຄ່າຂາດທຶນ ທາງອາກອນ*	*ສິດນຳໃຊ້ຮອດ ວັນ ທີ 30 ມິຖຸນາ 2022*	*ສິດທີ່ບໍ່ທັນນຳໃຊ້ ແຕ່ບໍ່ສາມາດນຳ ໃຊ້*	*ສິດທີ່ບໍ່ທັນນຳໃຊ້ນ ວັນທີ 30 ມິຖຸນາ 2022*
2019	2022	22,074,986,857	-	-	22,074,986,857
2020	2025	34,611,776,360	-	-	34,611,776,360
2021	2026	12,384,451,613	-	-	12,384,451,613
2022	2027	7,372,926,711	-	-	7,372,926,711
ລວມ		**76,444,141,541**	**-**	**-**	**76,444,141,541**

ຂາດທຶນທາງອາກອນທີ່ຄາດຄະເນຕາມການເປີດເຜີຍອາກອນກຳໄລຂອງບໍລິສັດ ສຳລັບໄລຍະແມ່ນຍັງບໍ່ທັນໄດ້ຮັບການກວດສອບຈາກເຈົ້າໜ້າທີ່ສ່ວຍສາອາກອນທ້ອງຖິ່ນ ນະວັນທີຂອງເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ.

21. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນໄລຍະມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ*	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ລາຍຈ່າຍໃນນາມຂອງພາກສ່ວນກ່ຽວຂ້ອງ	-	111,709,960
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ລາຍຈ່າຍຈາກການຈັດຊື້ວັດຖຸດິບ	-	256,666,240

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ມິຖຸນາ 2022 ແລະ ວັນທີ 31 ທັນວາ 2021 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ມິຖຸນາ 2022 ກີບ*	*31 ທັນວາ 2021 ກີບ*
ມູນຄ່າໜີ້ຕ້ອງສົ່ງພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກ ຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	738,922,588	738,922,588
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	4,989,651,549	4,989,651,549
			5,728,574,137	**5,728,574,137**
***ໜີ້ຕ້ອງສົ່ງອື່ນໆ** (ບົດອະທິບາຍເລກທີ 14)*				
ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ (CYC)	ຜູ້ຖືຮຸ້ນ	ເງິນປັນຜົນຕ້ອງຈ່າຍ	7,736,383,104	7,736,383,104
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ເງິນປັນຜົນຕ້ອງຈ່າຍ	5,844,980,856	5,844,980,856
			13,581,363,960	**13,581,363,960**

21. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະບໍລິຫານພາຍໃນໄລຍະມີດັ່ງລຸ່ມນີ້:

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ເງິນເດືອນ ແລະ ໂບນັດ	333,266,220	340,830,900
	333,266,220	**340,830,900**

22. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 30 ມິຖຸນາ 2022 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນ ເອກະສານລາຍງານການເງິນ.

23. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີນະວັນທີ 30 ມິຖຸນາ 2022 ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີດັ່ງກ່າວແມ່ນໄດ້ຖືກອະນຸມັດໂດຍຄະນະບໍລິຫານຂອງບໍລິສັດ ໃນວັນທີ 29 ສິງຫາ 2022.

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ຈ່າງ ລີ້
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຢົງຟູ
ຜູ້ຈັດການຝ່າຍບັນຊີ - ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2022